**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມ ຈນກ

ເລກທີ...0320..../ທສວ

ນະຄອນຫຼວງວຽງຈັນ, ວັນທີ..20... ພຶດສະພາ 2026

**ປະກາດຮັບສະໝັກພະນັກງານຕຳແໜ່ງຜູ້ຊ່ວຍຕິດຕາມ ແລະ ປະເມີນຜົນ ການສະໜອງທຶນໂຄງການວິຊາການ**

1. ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ກະຊວງອຸດສາຫະກຳ ແລະ ການຄ້າ ມີແຜນຈັດຈ້າງພະນັກງານຕາມສັນຍາຕຳແໜ່ງຜູ້ຊ່ວຍຕິດຕາມ ແລະ ປະເມີນຜົນ ການສະໜອງທຶນໂຄງການວິຊາການ ປະຈຳຢູ່ ທສວ;
2. ສຳລັບໜ້າວຽກທີ່ຈະມອບໝາຍ (TOR) ໂດຍຫຍໍ້ ມີລາຍລະອຽດດັ່ງລຸ່ມນີ້:
   - ສ້າງ ແລະ ພັດທະນາຖານຂໍ້ມູນ, ແບບຟອມທີ່ທັນສະໄໝ ແລະ ບຳລຸງຮັກສາຖານຂໍ້ມູນ;
   - ສົມທົບກັບພະນັກງານຜູ້ວິເຄາະໂຄງການວິຊາການທົ່ວໄປ, ບູລິມະສິດ ແລະ ທຶນສົມທົບ ເພື່ອຂຶ້ນແຜນລົງຕິດຕາມ-ປະເມີນຜົນ ການຈັດຕັ້ງປະຕິບັດບັນດາໂຄງການທີ່ໄດ້ຮັບທຶນ ຂອງ ທສວ ແຕ່ລະໄລຍະ;
   - ພັດທະນາ ແລະ ວິເຄາະຂໍ້ມູນ (Data analysis), ການຈັດການຂໍ້ມູນຫຼັງບ້ານ-ສະແດງຜົນ(Dashboard View Report) ແລະ ຕິດຕາມຕົວຊີ້ວັດການປະເມີນຜົນ (KPI Report);
   - ພັດທະນາ, ປ້ອນຂໍ້ມູນການສະໜອງທຶນໃຫ້ແກ່ ຈນກ ສຳຫຼັບໂຄງການວິຊາການທົ່ວໄປ, ບູລິມະສິດ, ທຶນສົມທົບເພື່ອປັບປຸງ ແລະ ຍົກລະດັບເຕັກໂນໂລຊີຂອງ ທສວ ເຂົ້າໃນຖານຂໍ້ມູນ ໂດຍຈັດແບ່ງເປັນໝວດໝູ່, ປະເພດ, ແຂວງ ແລະ ຂະແໜງການປະຈຳເດືອນ.

**(ລາຍລະອຽດຂອງໜ້າວຽກໄດ້ຄັດຕິດ QR ມາພ້ອມນີ້)**

3. ເງື່ອນໄຂຂອງຜູ້ສະໝັກມີລາຍລະອຽດດັ່ງລຸ່ມນີ້:
   - ຈົບການສຶກສາລະດັບປະລິນຍາຕີຂຶ້ນໄປ ສາຂາ ຄອມພິວເຕີ, ເສດຖະສາດ, ບໍລິຫານທຸລະກິດ, ສາຂາພັດທະນາສັງຄົມ ແລະ ສາຂາອື່ນທີ່ກ່ຽວຂ້ອງ;
   - ມີປະສົບການເຮັດວຽກ ກ່ຽວກັບ ການວິເຄາະຂໍ້ມູນ ແລະ ການສ້າງຖານຂໍ້ມູນ ມາກ່ອນຢ່າງໜ້ອຍ 03 ປີຂຶ້ນໄປ ຈະພິຈາລະນາເປັນພິເສດ;
   - ມີຄວາມຮູ້ໃນການສ້າງຖານຂໍ້ມູນ ແລະ ສ້າງລະບົບການຕິດຕາມ ແລະ ປະເມີນຜົນລວມໄປເຖິງການລາຍງານທີ່ຖືກຕ້ອງ ແລະ ເໝາະສົມ;
   - ມີທັກສະໃນການຂຽນຂຽນຄົ້ນຄວ້າເອກະສານ, ສ້າງເອກະສານລາຍງານ ແລະ ບົດສະຫຼຸບຕ່າງໆ;
   - ມີຄວາມສາມາດສື່ສານເປັນພາສາອັງກິດ (ຂຽນ, ອ່ານ, ຟັງ ແລະ ເວົ້າໄດ້ໃນລະດັບດີ);
   - ສາມາດນຳໃຊ້ທັກສະພື້ນຖານຄອມພິວເຕີໄດ້ເປັນຢ່າງດີ ແລະ ຮູ້ນຳໃຊ້ Word, Excel, PowerPoint, AI, Power BI, Canva ແລະ ອື່ນໆທີ່ຈຳເປັນ;
4. ຕ້ອງສົ່ງເອກະສານສະໝັກກ່ອນ**ວັນທີ 05 ມິຖຸນາ 2026** (ໃນໂມງລັດຖະການ 8:30 ໂມງຫາ 16:00 ໂມງ ວັນຈັນ ເຖິງ ວັນສຸກ) ຢູ່ຊັ້ນ 3, ຫ້ອງ 301 ຂອງກົມສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະ ໜາດນ້ອຍ ແລະ ກາງ, ກະຊວງ ອຸດສາຫະກຳ ແລະ ການຄ້າ, ເບີໂທ: 021 410005, ວ໋ອດແອັບ: 020 777 11 897, ອີເມວ: Vilaiya.p@gmail.com.

**ຜູ້ອຳນວຍການກອງທຶນ**

ໝາຍເຫດ: QR ລາຍລະອຽດ TOR

ນ. ມະນີວອນ ວົງໄຊ